# ເສັ່ງດາຍຈຳປາເມືອງລາວ

ໂອນໍດວງດອກໄມ້　　ມາລາຄູ່ໃຈຮຽມ
ຈຳປາງາມນາມສງ່ຽມ　　ເກີດຄູ່ຄຽງນະຄອນກວ້າງ
ເປັນດອກດວງທີ່ໝາຍໄວ້　　ຫົວໃຈລາວທັງຊາດ
ປະກາດດັ່ງກ້ອງຟ້າ　　ຈຳປານັ້ນຕ້ອງຄູ່ລາວ  ທ່ານເອີຍ

ກີບຂາວບານເບັ່ງຊ້ອນ　　ຖືກຖອນກິ່ນໄປຂາຍ　　ເສັ່ງດາຍເດ
ລັ່ນທົມຢາຍຢູ່ແດນໄທ　　ເພິ່ນໃສ່ນາມແປງຊື້
ຫຼືເຣລາວະດີນ້ອຍ　　ຈຳປາພອຍພັດຖິ່ນ
ສົ່ງກິ່ນຫອມທົ່ວບ້ານ　　ບານເຫຼື່ອມຢູ່ຕ່າງແດນ

ດຽວນີ້ຢູ່ເຂດແຄວ້ນ　　ຕ່າງແດນເພິ່ນມີຫຼາຍ
ປູກຢັ້ງຢາຍເຕັມສວນ　　ຄູ່ມວນມາລີນ້ອຍ
ສົ່ງກິ່ນລອຍໄປທາງໜ້າ　　ໄປຫາບານຢູ່ບ້ານເພິ່ນ
ເປີ່ນເວີ່ນຊອນກີບພົ້ນ　　ບານເຕັມຕົ້ນຢູ່ຝັ່ງໄທ　　ທ່ານເອີຍ

ຕົ້ນຈຳປາປຽບໄດ້　　ສິນຄ້າໃຫມ່ກຳໄຣດີ
ບໍ່ມີໃຜຫຼີງເຫັນ　　ວ່າຄ່າສູງພຽງຟ້າ
ຮຽມນີ້ໂສກາເສົ້າ　　ຕອນເມືອຢາມບ້ານເກົ່າ
ຈຳປາເພື່ອນແຕ່ຍັງເຍົາ　　ເຈົ້າຖືກຖອນຖອດມ້າງ
　　ໄດ້ລາລ້າງຫ່າງສວນ  ແລ້ວນໍ

ມວນໝູ່ລາວທີ່ພາກບ້ານ　　ຖິ່ນຖານເກົ່າກໍເຫງົາຕຣົມ
ສຸດຣະທົມກົມກືນ　　ຍັງຕ່າວຄືນເມືອຢາມບ້ານ
ສົງສານເດ ! ບາດວ່າຈຳປາໄຫ້　　ແສນອາລັຍຢາກກັບຖິ່ນ
ເຂົາຝັງດິນປູກໄວ້　　ໄປບໍ່ໄດ້ດັ່ງໃຈ　　ທ່ານເອີຍ

ປ່າສະຫງວນເຄີຍຮັກໄວ້ ຕົ້ນໄມ້ໃຫຍ່ບໍ່ຄວນຕັດ
ຈັດເປັນຂອງຫວງແຫນ ຕ່າງແດນຢ່າມາຕ້ອງ
ບາດວ່າ ຈຳປາທອງຂອງຂ້າ ສັງມາເປັນສິນຄ້າຕ່າງ
ຕົ້ນຈຳປາ ຂອງຄູ່ລາວລ້ານຊ້າງ ແຕ່ປາງເຄົ້າເກົ່າປະຖົມ ທ່ານເອີຍ

ຝາກແດ່ທ່ານຜູ້ອ່ານທຸກໆທ່ານ

ດ້ວຍຄວາມນັບຖື

ໂດຍ: ສາວຫູັກເຈັດ